ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3656 /ທຄຕລ.2024

ນະຄອນຫຼວງວຽງຈັນ, ວັນທີ: 28 OCT 2024

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຕິດຕັ້ງແກ້ວ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາປັບປຸງແກ້ວໜ້າອາຄານສຳນັກງານ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ຮັບເໝົາກໍ່ສ້າງ, ຕົບແຕ່ງ ແລະ ຕິດຕັ້ງແກ້ວ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາ ວຽກປັບປຸງແກ້ວໜ້າອາຄານ ທຄຕລ ສຳນັກງານໃຫຍ່ ຕັ້ງຢູ່ ຖະໜົນປາງຄຳ ບ້ານຊຽງຍືນ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

## I. ລາຍການທີ່ຈະປັບປຸງປະກອບມີ

### 1. ໜ້າວຽກຫຼັກ

1) ລອກກາວເກົ່າຢູ່ຮ່ອງແກ້ວດ້ານນອກອອກທັງໝົດ;
2) ອະນາໄມຮ່ອງແກ້ວໃຫ້ສະອາດ;
3) ສີດກາວໃໝ່ໃສ່ ຕ້ອງເປັນກາວທີ່ໃຊ້ກັບງານແກ້ວສະເພາະ ທີ່ຮັບປະກັນ ແລະ ມີຄຸນນະພາບ ຍີ່ຫໍ້ Dow Corning 791 ສີໃສ ສຳລັບກາວເກົ່າທີ່ຈັບຢູ່ກັບໂຄງສ້າງດ້ານໃນແມ່ນຮັກສາໄວ້ຄືເກົ່າ;
4) ອະນາໄມແກ້ວດ້ານນອກທັງໝົດໃຫ້ສະອາດພາຍຫຼັງປະຕິບັດວຽກສຳເລັດ;

### 2. ຂະໜາດ ແລະ ບໍລິມາດຂອງໜ້າວຽກ

1) ຕຶກ A ຈຳນວນ 144 ແຜ່ນ ຂະໜາດຂອງແກ້ວ ລວງສູງ 107cm/ແຜ່ນ ລວງກວ້າງ 60cm/ແຜ່ນ ຄວາມໜາ 06mm:
2) ຕຶກ B ຈຳນວນ 104 ແຜ່ນ ຂະໜາດຂອງແກ້ວ ລວງສູງ 95cm/ແຜ່ນ ລວງກວ້າງ 66cm/ແຜ່ນ ຄວາມໜາ 06mm;
3) ຕຶກ C ຈຳນວນ 336 ແຜ່ນ ຂະໜາດຂອງແກ້ວ ລວງສູງ 106.2cm/ແຜ່ນ ລວງກວ້າງ 72.5cm/ແຜ່ນ ຄວາມໜາ 06mm;
4) ຕຶກ D ຈຳນວນ 45 ແຜ່ນ ຂະໜາດຂອງແກ້ວ ລວງສູງ 120cm/ແຜ່ນ ລວງກວ້າງ 101cm/ແຜ່ນ ຄວາມໜາ 06mm.

## II. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ (ສຳເນົາໃບທະບຽນວິຫາສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023 ແລະ ໃບອະນຸຍາດດຳເນີນທຸລະກິດ);
2) ເອກະສານກ່ຽວກັບມາດຕະຖານເຕັກນິກແມ່ນໃຫ້ລະບຸລົບຖ້ວນກ່ຽວກັບວັດສະດຸ, ຍີ່ຫໍ້/ລຸ້ນ ຂອງກາວທີ່ຈະນຳໃຊ້, ວິທີການປະຕິບັດ, ກຳນົດໄລຍະເວລາສຳເລັດວຽກ (ສາມາດປະຕິບັດວຽກໄດ້ສະເພາະວັນເສົາ-ວັນອາທິດ) ແລະ ໄລຍະເວລາການຮັບປະກັນ;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກຳນົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **15/11/2024** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ທີ່ປ້ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http://www.bcel.com.la E-mail: bcelhqv@bcel.com.la SWIFT Code: COEBLALA

**2. ເອກະສານຊອງທີ 2 (ປິດຊອງ)**

1) ໃບສະເໜີລາຄາໃຫ້ລະບຸລາຄາລວມອາກອນມູນຄ່າເພີ່ມ ທັງໝົດເປັນສະກຸນເງິນກີບ ໃຫ້ຄົບຖ້ວນ;
2) ໃນວັນທີ **20/11/2024** ເວລາ **9:00** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ຮັບເໝົາ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 28/02/2025) ຫຼື ແຊັກທີ່ວິຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

## III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ສະໜອງ.

## IV. ການຊໍາລະ ແບ່ງເປັນ 02 ງວດ

1) ງວດທີ 01: ຊໍາລະ 90% ຂອງມູນຄ່າທັງໝົດ ພາຍຫຼັງປະຕິບັດວຽກສໍາເລັດ 100% ໂດຍໄດ້ຮັບການກວດວຽກຈາກຄະນະກໍາມະການຕິດຕາມກວດກາ ຫຼື ຄະນະກໍາມະການກ່ຽວຂ້ອງ ທຄຕລ;
2) ງວດທີ 02: ຊໍາລະເງິນຄໍ້າປະກັນຄຸນນະພາບ ທີ່ຫັກໄວ້ 10% ຂອງມູນຄ່າທັງໝົດ ໄລຍະ 01 ປີ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

**ນ. ສາຍສະໝອນ ຈັນທະຈັກ**

**ຜູ້ປະສານງານ:**

ທ່ານ ພູວອນ ສໍອີນໄຊ 020 5955 9889



ຕຶກ A


ຕຶກ B



ຕຶກ C


ຕຶກ D